ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

pwc

ເອກະສານລາຍງານການເງິນ
(ທີ່ບໍ່ທົບທວນຄືນ)

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2023



www.pwc.com/la

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

ສາລະບານ	ໜ້າ
ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານຖານະການເງິນ	1
ໃບລາຍງາຍຖານະການເງິນ	2 - 3
ໃບລາຍງານຜົນໄດ້ຮັບ	4
ໃບລາຍງານສ່ວນປ່ຽນແປງທຶນ	5
ໃບລາຍງານກະແສເງິນສົດ	6 - 7
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້	8 - 19

pwc

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄົນເອກະສານລາຍງານການເງິນ

ພວກເຮົາ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ. ເຊິ່ງປະກອບມີໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2023, ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ ຫົກ ເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້, ຜູ້ບໍລິຫານ ຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ 2 ໃນເອກະສານລາຍງານການເງິນ. ຄວາມຮັບຜິດຊອບຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້ ດັ່ງກ່າວອີງພື້ນຖານຜົນຂອງການທົບທວນຄືນຂອງພວກເຮົາ.

ຂອບເຂດການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນຕາມມາດຕະຖານການທົບທວນຄືນສາກົນ 2410, "ການທົບທວນຄືນເອກະສານລາຍງານການເງິນ ໂດຍ ຜູ້ກວດສອບອິດສະຫຼະ" ການທົບທວນຄືນນີ້ປະກອບໂດຍການໃຊ້ວິທີການສອບຖາມ ໂດຍສ່ວນໃຫຍ່ແມ່ນບຸກຄົນທີ່ຮັບຜິດຊອບ ດ້ານການ ເງິນ ແລະ ການບັນຊີ ແລະ ໃຊ້ວິທີວິເຄາະ ແລະ ຂັ້ນຕອນການທົບທວນຄືນອື່ນໆ, ການທົບທວນຄືນມີຂອບເຂດຈຳກັດກວ່າການກວດສອບ ຕາມມາດຕະຖານການກວດສອບສາກົນ ເພາະສະນັ້ນ ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນ ສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກເຮົາໄດ້ ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມຄິດເຫັນໃນການກວດສອບ ທົບທວນຄືນ.

ການສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກເຮົາແມ່ນບໍ່ມີຫຍັງທີ່ສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ຂໍ້ມູນທາງການເງິນ ດັ່ງກ່າວ ບໍ່ສະໜອງຂໍ້ມູນທີ່ ຖືກຕ້ອງ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ

ໂດຍ: ພິງພັນ ດຳຣົງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 29 ສິງຫາ 2023

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

ຊັບສິນ	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	5,335,688,215	5,494,674,970
ໜີ້ຕ້ອງຮັບທາງການຄ້າ-ສຸດທິ	5	23,621,747,880	22,455,453,337
ສິນຄ້າໃນສາງ-ສຸດທິ	6	730,935,781	399,335,819
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	20.5	137,385,511,966	139,898,947,042
ຊັບສິນໝຸນວຽນອື່ນໆ	7	669,275,614,219	542,108,548,402
ລວມຊັບສິນໝຸນວຽນທັງໝົດ		**836,349,498,061**	**710,356,959,570**
ຊັບສິນບໍ່ໝຸນວຽນ			
ຊັບສົມບັດຄົງທີ່ມີຕົວຕົນ-ສຸດທິ	8	371,598,871,526	372,037,173,827
ຊັບສົມບັດຄົງທີ່ບໍ່ມີຕົວຕົນ-ສຸດທິ	9	2,495,950,534	2,896,193,364
ຊັບສົມບັດຄົງທີ່ເພື່ອການລົງທຶນ-ສຸດທິ	10	199,807,083,021	200,162,726,629
ການລົງທຶນໃນບໍລິສັດໃນເຄືອ		198,000,000,000	198,000,000,000
ຊັບສິນບໍ່ໝຸນວຽນອື່ນໆ	11	45,788,228,856	46,561,690,945
ລວມຊັບສິນບໍ່ໝຸນວຽນທັງໝົດ		**817,690,133,937**	**819,657,784,765**
ລວມຊັບສິນທັງໝົດ		**1,654,039,631,998**	**1,530,014,744,335**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company
ນະຄອນ ຫລວງ ວຽງຈັນ

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 29 ສິງຫາ 2023

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທີ່ບທວນຄືນ ໂດຍຫຍໍ້

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	12	8,403,624,537	7,185,390,779
ໜີ້ຕ້ອງສົ່ງອາກອນ	13	11,361,556,355	8,393,697,123
ເງິນກູ້ຢືມໄລຍະສັ້ນ	14	192,630,597,259	191,355,503,214
ໜີ້ສິນໝຸນວຽນອື່ນໆ	15	350,661,615,074	279,178,512,954
ລວມໜີ້ສິນໝຸນວຽນທັງໝົດ		**563,057,393,225**	**486,113,104,070**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	14	648,585,328,000	584,370,984,000
ລວມໜີ້ສິນບໍ່ໝຸນວຽນທັງໝົດ		**648,585,328,000**	**584,370,984,000**
ລວມໜີ້ສິນທັງໝົດ		**1,211,642,721,225**	**1,070,484,088,070**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	16	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		313,029,203,069	313,029,203,069
ກຳໄລ/(ຂາດທຶນ) ສະສົມ			
ຈັດສັນ - ຄັງແຮຕາມລະບຽບການ	17	3,708,530,711	3,708,530,711
ຄັງແຮອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍຖ້າແບ່ງປັນ		(373,957,023,326)	(356,823,277,834)
ລວມທຶນທັງໝົດ		**442,396,910,773**	**459,530,656,265**
ລວມໜີ້ສິນ ແລະ ທຶນທັງໝົດ		**1,654,039,631,998**	**1,530,014,744,335**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 29 ສິງຫາ 2023

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2023 ກີບ	ທົບທວນຄືນ 30 ມິຖຸນາ 2022 ກີບ
ລາຍຮັບ		995,228,165	763,453,848
ຕົ້ນທຶນຂາຍ		(37,029,756)	(35,300,136)
ກຳໄລເບື້ອງຕົ້ນ		**958,198,409**	**728,153,712**
ລາຍຮັບອື່ນໆ		28,468,837,643	10,557,403,041
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ		(629,913,261)	(12,672,055,520)
ລາຍຈ່າຍໃນການຂາຍ		(17,400,000)	(146,727,000)
ລາຍຈ່າຍບໍລິຫານ		(12,587,112,581)	(10,771,767,714)
ກຳໄລ/(ຂາດທຶນ) ຈາກການດຳເນີນງານ		**16,192,610,210**	**(12,304,993,481)**
ລາຍຈ່າຍທາງການເງິນ		(33,326,355,702)	(22,916,884,676)
ຂາດທຶນ ສຸດທິກ່ອນຫັກອາກອນ		**(17,133,745,492)**	**(35,221,878,157)**
ອາກອນກຳໄລ	18	-	-
ຂາດທຶນ ສຸດທິສຳລັບໄລຍະ		**(17,133,745,492)**	**(35,221,878,157)**
ຂາດທຶນ ຕໍ່ຮຸ້ນ			
ຂາດທຶນ ພື້ນຖານຕໍ່ຮຸ້ນ	19	(73)	(150)

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 29 ສິງຫາ 2023

ທ່ານ ນາງ ຈັນທະດອມ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນ
ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2023

	ບິດ ອະທິບາຍ	ທຶນຈົດທະບຽນ ທີ່ຖອກແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສ່ວນເພີ່ມຈາກການ ຕີມູນຄ່າ ກີບ	ກຳໄລ/(ຂາດທຶນ) ສະສົມ ຄ້ຽງແຮຕາມ ລະບຽບການ ກີບ	ຄ້ຽງແຮອື່ນໆ ກີບ	ຂາດທຶນສະສົມ ລ່ຖ້າແຜ່ງປັນ ກີບ	ລວມ ກີບ
ຍອດຍົກມາໃນວັນທີ 1 ມັງກອນ 2022 - ກວດສອບ	16, 17	**470,000,000,000**	**27,638,932,340**	-	**3,708,530,711**	**1,977,267,979**	**(350,856,885,267)**	**152,467,845,763**
ຂາດທຶນສຸດທິສຳລັບໄລຍະ		-	-	-	-	-	(35,221,878,157)	(35,221,878,157)
ຍອດເຫຼືອໃນວັນທີ 30 ມິຖຸນາ 2022 - ທີ່ບທວນຄືນ		**470,000,000,000**	**27,638,932,340**	-	**3,708,530,711**	**1,977,267,979**	**(386,078,763,424)**	**117,245,967,606**
ຍອດຍົກມາໃນວັນທີ 1 ມັງກອນ 2023 - ກວດສອບ	16, 17	**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(356,823,277,834)**	**459,530,656,265**
ຂາດທຶນສຸດທິສຳລັບໄລຍະ		-	-	-	-	-	(17,133,745,492)	(17,133,745,492)
ຍອດເຫຼືອໃນວັນທີ 30 ມິຖຸນາ 2023 - ທີ່ບທວນຄືນ		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(373,957,023,326)**	**442,396,910,773**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 29 ສິງຫາ 2023

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ສິງຫາ 2023

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທີ່ບທວນຄືນ ໂດຍຫຍໍ້

	ບົດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ຂາດທຶນກ່ອນຫັກອາກອນກຳໄລສຳລັບໄລຍະ		(17,133,745,492)	(35,221,878,157)
ປັບປຸງເພື່ອສົມທຽບຂາດທຶນສຸດທິກັບເງິນສົດສຸດທິ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	8,9,10	2,636,453,216	2,881,710,081
ຫັກຄືນຄັ້ງແຮຄ່າເສື່ອມໜີ້ສິງໄສຈະເສຍ		(119,583,728)	(232,143,124)
ລາຍຮັບດອກເບ້ຍ		(5,175,728,129)	(4,198,479,456)
ລາຍຈ່າຍດອກເບ້ຍ		33,326,355,702	22,916,884,676
ກຳໄລ/(ຂາດທຶນ)ຈາກການດຳເນີນງານກ່ອນ ການປ່ຽນແປງເງິນທຶນໝຸນວຽນ		**13,533,751,569**	**(13,853,905,980)**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ		(1,046,710,815)	(3,125,940,727)
ສິນຄ້າໃນສາງ		(331,599,962)	(33,543,699)
ໜີ້ຕ້ອງສົ່ງທາງການຄ້າ		1,140,060,680	6,279,755
ໜີ້ຕ້ອງສົ່ງອາກອນ		2,967,859,232	(855,375,070)
ຊັບສິນອື່ນໆ		(131,910,494,600)	(172,439,876,049)
ໜີ້ສິນອື່ນໆ		118,919,393,616	154,124,789,747
ເງິນສົດທີ່ເກີດຂຶ້ນຈາກ/(ໃຊ້ໃນ) ການດຳເນີນງານ		**3,272,259,720**	**(36,177,572,023)**
ດອກເບ້ຍທີ່ໄດ້ຮັບ		625,190,333	100,539,289
ດອກເບ້ຍທີ່ໄດ້ຈ່າຍ		(3,119,004,911)	(3,427,515,705)
ເງິນສົດສຸດທິຈາກ/(ໃຊ້ໃນ) ກິດຈະກຳການດຳເນີນງານ		**788,445,142**	**(39,504,548,439)**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນບັດຄົງທີ່		(1,369,866,374)	(4,007,511,605)
ເງິນກູ້ທີ່ໄດ້ຮັບໃນລະຫວ່າງໄລຍະ		-	199,176,550
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(1,369,866,374)**	**(3,808,335,055)**

ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 29 ສິງຫາ 2023

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ສິງຫາ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທີ່ບທວນຄືນ ໂດຍຫຍໍ້

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2023

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2023 ກີບ	ທົບທວນຄືນ 30 ມິຖຸນາ 2022 ກີບ
ກະແສເງິນສົດຈາກ ກິດຈະກຳການເງິນ			
ຮັບເງິນຈາກການກູ້ຢືມ		66,697,256,733	43,121,036,790
ຊຳລະເງິນກູ້ຢືມ		(66,324,000,000)	-
ເງິນສົດສຸດທິ ຈາກກິດຈະກຳການເງິນ		**373,256,733**	**43,121,036,790**
ໜຸດລົງ ສຸດທິໃນເງິນສົດ ແລະ ລາຍການ ທຽບເທົ່າເງິນສົດ		(218,164,499)	(191,846,704)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນ ໄລຍະ	4	5,494,674,970	941,053,632
ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນໃນເງິນສົດ ແລະລາຍການທຽບເທົ່າເງິນສົດ		59,177,744	(56,235,268)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳ ລັບທ້າຍໄລຍະ		**5,335,688,215**	**692,971,660**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ບັນຊີໜີ້ຕ້ອງສົ່ງ ສຳລັບຊັບສິນຄົງທີ່		72,398,103	12,491,327

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 29 ສິງຫາ 2023

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ສິງຫາ 2023

1 ຂໍ້ມູນທົ່ວໄປ

ບໍລິສັດ ປິໂຕຣລັງມເທຣດດິ້ງ ລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ ບໍລິສັດ) ແມ່ນເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ, ແມ່ນບໍລິສັດທີ່ດຳເນີນທຸລະກິດ ແລະ ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ລົງທຶນ 99% ໃນບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປິໂຕຣເທຣດ ດີສທະບິວຊັນ ຈຳກັດ ຕາມລຳດັບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເປັນບໍລິສັດຖືຮຸ້ນ ແລະ ໃຫ້ບໍລິການບັດເຕີມນ້ຳມັນ (ບັດພລັສກາດ).

ເອກະສານລາຍງານການເງິນ ສະບັບນີ້ ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນ ວັນທີ 29 ສິງຫາ 2023.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2022. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ແມ່ນຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີ ໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນ ສະບັບນີ້ ຄວນອ່ານຄຸ່ກັບບົດລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2022.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ທີ່ບທວນຄືນ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານການເງິນ ທີ່ບທວນຄືນ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ນະໂຍບາຍການບັນຊີຂອງ ບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານລາຍງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ເງິນສົດໃນມື	16,392,500	16,261,500
ເງິນສົດໃນທະນາຄານ	5,319,295,715	5,478,413,470
	5,335,688,215	**5,494,674,970**

5 ໜີ້ຕ້ອງຮັບທາງການຄ້າ-ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 20.3)	11,641,412,675	11,908,699,209
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນອື່ນ	18,589,871,086	17,275,873,737
	30,231,283,761	**29,184,572,946**
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(6,609,535,881)	(6,729,119,609)
ໜີ້ຕ້ອງຮັບທາງການຄ້າ - ສຸດທິ	**23,621,747,880**	**22,455,453,337**

6 ສິນຄ້າໃນສາງ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ເຄື່ອງໃຊ້ຫ້ອງການ	615,988,421	264,720,835
ບັດເຕີມນ້ຳມັນ Plus card	114,947,360	134,614,984
	730,935,781	**399,335,819**
ຫັກ: ສຳຮອງຄ່າເສື່ອມມູນຄ່າຕາມມູນຄ່າສຸດທິ	-	-
ສິນຄ້າໃນສາງ, ສຸດທິ	**730,935,781**	**399,335,819**

7 ຊັບສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງຮັບອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 20.3)	162,574,208,498	135,792,298,997
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	2,703,513,266	2,637,279,152
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	3,534,743,090	3,324,973,515
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	80,000,000	85,000,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	1,146,854,492	1,146,854,492
ໜີ້ຕ້ອງຮັບ ດອກເບ້ຍ (ບົດອະທິບາຍຂໍ້ 20.3)	40,923,686,781	33,804,272,520
ໜີ້ຕ້ອງຮັບຈາກການປະກອບທຶນ (ບົດອະທິບາຍຂໍ້ 20.3)	36,368,330,104	36,368,330,104
ຂາດທຶນລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	421,944,277,988	328,949,539,622
	669,275,614,219	**542,108,548,402**

8 ຊັບສິມບັດຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2023 - ກວດສອບ	372,037,173,827
ເພີ່ມຂຶ້ນ	1,436,914,477
ຫັກ: ຄ່າຫຼ້ຍຫ້ຽນ	(1,875,216,778)
ມູນຄ່າຍັງເຫລືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2023 - ທີ່ບທວນຄືນ	**371,598,871,526**

9 ຊັບສິມບັດຄົງທີ່ບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2023 - ກວດສອບ	2,896,193,364
ເພີ່ມ	5,350,000
ຫັກ: ຄ່າເສື່ອມມູນຄ່າ	(405,592,830)
ມູນຄ່າຍັງເຫລືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2023 - ທີ່ບທວນຄືນ	**2,495,950,534**

10 ຊັບສິນເພື່ອການລົງທຶນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2023 - ກວດສອບ	200,162,726,629
ຫັກ: ຄ່າຫຼ້ຍຫ້ຽນ	(355,643,608)
ມູນຄ່າຍັງເຫລືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2023 - ທີ່ບທວນຄືນ	**199,807,083,021**

11 ຊັບສິນບໍ່ໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ລາຍຈ່າຍລ່ວງໜ້າ*	39,580,990,856	40,354,452,945
ເງິນຈ່າຍລ່ວງໜ້າໃຫ້ປ້ຳນ້ຳມັນ ແລະ ອື່ນໆ	6,207,238,000	6,207,238,000
	45,788,228,856	**46,561,690,945**

*ສ່ວນໃຫຍ່ແມ່ນປະກອບມີ ຍອດຄົງເຫຼືອຂອງ ເງິນຈ່າຍລ່ວງໜ້າໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນ 34,419,839,505 ກີບ (2022: 34,419,839,505 ກີບ) (ບົດອະທິບາຍຂໍ້ 20.3) ແລະ ລາຍຈ່າຍລ່ວງໜ້າອື່ນໆ.

12 ໜີ້ຕ້ອງສົ່ງທາງການຄ້າ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນອື່ນ	7,620,386,351	5,768,371,684
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນກ່ຽວຂ້ອງ (ບົດອະທິບາຍຂໍ້ 20.3)	783,238,186	1,417,019,095
	8,403,624,537	**7,185,390,779**

13 ໜີ້ຕ້ອງສົ່ງອາກອນ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	5,486,334,708	2,570,742,688
ໜີ້ຕ້ອງສົ່ງອາກອນລາຍໄດ້ສ່ວນບຸກຄົນ	185,541,653	133,804,915
ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມລະບຽບການ *	5,689,679,994	5,689,149,520
	11,361,556,355	**8,393,697,123**

*ສ່ວນໃຫຍ່ແມ່ນ ຍອດຄ້າງຊຳລະຂອງໜີ້ຕ້ອງສົ່ງອາກອນ ແມ່ນອີງຕາມການປະເມີນຂອງເຈົ້າໜ້າທີ່ອາກອນ ລົງວັນທີ 27 ທັນວາ 2019.

ເຈົ້າໜ້າທີ່ອາກອນໄດ້ກວດກາ ແລະ ອອກປົດບັນທຶກກ່ຽວກັບພັນທະຂອງຄ່າໃຊ້ຈ່າຍອາກອນ ສຳລັບ ສົກປີ 2014 - 2017 ຈຳນວນ ເງິນ 20,835,576,105 ກີບ. ພ້ອມກັນນີ້, ເຈົ້າໜ້າທີ່ອາກອນໄດ້ລະບຸໃນປົດບັນທຶກວ່າບໍລິສັດອາດຈະມີພັນທະໃນການຈ່າຍຄ່າ ປັບໄໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນເງິນ 7,417,484,961 ກີບ ເຊິ່ງຈຳນວນດັ່ງກ່າວແມ່ນຍັງບໍ່ສາມາດຕັດສິນໄດ້ ແລະ ຈຳເປັນໄດ້ຂໍຄຳເຫັນຈາກກະຊວງການເງິນ

13 ໜີ້ຕ້ອງສົ່ງອາກອນ (ຕໍ່)

ຜູ້ບໍລິຫານໄດ້ ບັນທຶກລາຍຈ່າຍຄ່າອາກອນຈຳນວນ 20,835,576,105 ກີບ ໃນໃບລາຍງານການເງິນສຳລັບສິ້ນສຸດປີ ໃນວັນທີ 31 ທັນວາ 2019, ແລະ ຍອດຄົງຄ້າງໜີ້ຕ້ອງສົ່ງ ໃນວັນທີ 30 ມິຖຸນາ 2023 ແມ່ນ 5,6 ຕື້ກີບ (2022: 5,6 ຕື້ກີ).

ກ່ຽວກັບພັນທະໜີ້ຕ້ອງສົ່ງຄ່າປັບໃໝ ແຕ່ປີ 2014-2017 ຈຳນວນ 7,417,484,961 ກີບ, ບໍລິສັດ ໄດ້ຮັບຍົດຍັນທຶກຈາກກົມສ່ວຍສາອາກອນ ອີງຕາມເອກະສານອ້າງອີງ ເລກທີ 0210 ລົງວັນທີ 28 ມັງກອນ 2020, ບາງສ່ວນຂອງພັນທະຄ່າປັບໃໝ ຂອງປີ 2014 ຫາ 2017 ຈຳນວນ 964,759,679 ກີບ ໄດ້ຮັບອະນຸຍາດໃຫ້ຍົກເວັ້ນ. ດັ່ງນັ້ນ, ໃນວັນທີ 30 ມິຖຸນາ 2023 ບໍລິສັດ ມີພັນທະໜີ້ຄ່າປັບໃໝທີ່ຍັງສະຫຼຸບບໍ່ໄດ້ ແລະ ຕ້ອງຂໍຄຳຄິດເຫັນ ສຸດທ້າຍຈາກກະຊວງການເງິນ ຈຳນວນ 6,452,725,282 ກີບ (2022: 6,452,725,282 ກີບ).

ໃນຂະນະດຽວກັນ, ຜູ້ບໍລິຫານ ພວມດຳເນີນການຂໍການຍົກເວັ້ນພັນທະດັ່ງກ່າວ. ເນື່ອງຈາກວ່າຍັງບໍ່ມີຄວາມແນ່ນອນຂອງຈຳນວນທີ່ຈະຖືກປັບໃໝ, ຜູ້ບໍລິຫານຈຶ່ງໄດ້ພິຈາລະນາບໍ່ບັນທຶກໜີ້ຕ້ອງສົ່ງ ຄ່າປັບໃໝ ຈຳນວນ 6,452,725,282 ກີບ (2022: 6,452,725,282 ກີບ) ເຂົ້າໃນເອກະສານລາຍງານການເງິນ.ໃນວັນທີລາຍງານການເງິນ ແມ່ນຢູ່ໃນຂັ້ນຕອນການກວດກາ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ

14 ເງິນກູ້ຢືມ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໝຸນວຽນ		
ສ່ວນໝຸນວຽນເງິນກູ້ຢືມໄລຍະຍາວຈາກທະນາຄານ	-	66,324,000,000
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 20.4)	192,630,597,259	125,031,503,214
	192,630,597,259	**191,355,503,214**
ບໍ່ໝຸນວຽນ		
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	648,585,328,000	584,370,984,000
	648,585,328,000	**584,370,984,000**
	841,215,925,259	**775,726,487,214**

14 ເງິນກູ້ຢືມ (ຕໍ່)

ອັດຕາດອກເບ້ຍທີ່ກ່ຽວຂ້ອງກັບເງິນກູ້ຢືມຂອງບໍລິສັດມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງທີ່	841,215,925,259	775,726,487,214
ເງິນກູ້ຢືມທັງໝົດ	**841,215,925,259**	**775,726,487,214**

ການກຳນົດການໄລຍະຂອງເງິນກູ້ຢືມຈາກທະນາຄານມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໄລຍະລະຫວ່າງ 1 ປີ ຫາ 2 ປີ	192,630,597,259	775,726,487,214
ໄລຍະລະຫວ່າງ 2 ປີ ຫາ 5 ປີ	648,585,328,000	-
	841,215,925,259	**775,726,487,214**

15 ໜີ້ສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ເງິນຮັບລ່ວງໜ້າຈາກລູກຄ້າ	8,017,259,620	7,413,536,972
ໜີ້ຕ້ອງສົ່ງອື່ນໆ	7,869,567,963	8,556,195,782
ໜີ້ຕ້ອງສົ່ງອື່ນໆ - ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 20.3)	266,426,081,597	212,765,808,189
ກຳໄລລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	68,310,588,337	50,442,972,011
	350,661,615,074	**279,178,512,954**

16 ທຶນຈົດທະບຽນ

ຮຸ້ນຂອງບໍລິສັດ (ພາຍໃຕ້ສັນຍາລັກ "PTL") ແມ່ນໄດ້ລົງທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການນັບຕັ້ງແຕ່ວັນທີ 10 ທັນວາ 2014 ຕາມໃບອະນຸຍາດສະບັບເລກທີ 005 ລົງວັນທີ 26 ພະຈິກ 2014. ຮຸ້ນທັງໝົດໃນວັນທີ 30 ມິຖຸນາ 2023 ມີຈຳນວນ 235,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 2,000 ກີບ.

ໃນໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2023 ແມ່ນບໍ່ໄດ້ມີການຫຼຸດ ຫຼື ອອກຮຸ້ນເພີ່ມ.

17 ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ ບໍລິສັດ ຕັ້ງຄັງສະສົມຕາມ ລະບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນຄັງສະສົມຕາມລະບຽບການຄົບ 50% ຂອງມູນຄ່າທຶນຈົດທະບຽນ.

ໃນໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2023 ແມ່ນບໍ່ໄດ້ມີການປ່ຽນແປງ ເທົ່າກັບ 3,708,530,711 ກີບ (2022: 3,708,530,711 ກີບ).

18 ອາກອນລາຍໄດ້

ອີງຕາມກົດໝາຍສ່ວຍສາອາກອນ ເລກທີ 259 ທີ່ມີຜົນບັງຄັບໃຊ້ໃນ ວັນທີ 1 ມັງກອນ 2020. ບໍລິສັດໄດ້ຄຳນວນອາກອນກຳໄລ ໂດຍອີງຕາມກຳໄລສຸດທິ ໃນອັດຕາ 20% (2022: 20%) ພາຍຫຼັງທີ່ໄດ້ພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ອະນຸຍາດ ເຊິ່ງໄດ້ ລະບຸໃນກົດໝາຍວ່າດ້ວຍອາກອນລາຍໄດ້.

ໃນ ສປປ ລາວ, ການສົ່ງຄືນອາກອນກຳໄລແມ່ນຈະໄດ້ຮັບການທົບທວນຢ່າງລະອຽດ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ນອກຈາກນີ້, ບັນຫາອາກອນທີ່ເພີ່ມຂຶ້ນໃນການກວດສອບອາດຕ້ອງໃຊ້ການຕັດສິນ ແລະ ພິຈາລະນາຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນຄືນສາມາດສົ່ງຜົນຕໍ່ການຊຳລະອາກອນເພີ່ມເຕີມ ຫຼື ອາດຈຳເປັນຕໍ່ການສົ່ງເງິນຄືນທີ່ສຳຄັນ. ເຊິ່ງຈະສົ່ງຜົນເຮັດ ໃຫ້ການຊຳລະເງິນ ຫຼື ສົ່ງຄືນເງິນ ຖືກບັນທຶກເປັນ ດັດປັບອາກອນກຳໄລໃນປີທີ່ສຳເລັດການທົບທວນຄືນ.

19 ຂາດທຶນ ພື້ນຖານຕໍ່ຮຸ້ນ

ພື້ນຖານການຄິດໄລ່ຂາດທຶນ ຕໍ່ຮຸ້ນ ຄິດໄລ່ຈາກການແບ່ງຂາດທຶນສຸດທິໃຫ້ຜູ້ຖືຮຸ້ນ ດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ ອອກພາຍໃນໄລຍະ.

	ທົບທວນຄືນ 30 ມິຖຸນາ 2023 ກີບ	ທົບທວນຄືນ 30 ມິຖຸນາ 2022 ກີບ
ຂາດທຶນສຸດທິ ຂອງຮຸ້ນສາມັນ (ກີບ)	(17,133,745,492)	(35,221,878,157)
ຄ່າສະເລ່ຍຂອງຈຳນວນຮຸ້ນສາມັນ (ຮຸ້ນ)	235,000,000	235,000,000
ຂາດທຶນພື້ນຖານຕໍ່ຮຸ້ນ (ກີບ)	(73)	(150)

20 ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນທີ່ມີຄວາມສຳພັນກັບບໍລິສັດໂດຍກົງ ຫຼື ອ້ອມ. ໂດຍທີ່ບໍລິສັດນັ້ນມີອຳນາດໃນການຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມດຽວກັນກັບ ກຸ່ມບໍລິສັດ ລວມເຖິງບໍລິສັດທີ່ດຳເນີນການລົງທຶນ ແລະ ບຸກຄະລາກອນທີ່ກ່ຽວຂ້ອງແມ່ນລວມມີ ວິສາຫະກິດຮຸ່ນສ່ວນ ແລະ ບຸກຄົນທີ່ເປັນເຈົ້າຂອງເອງ, ທາງກົງ ຫຼື ທາງອ້ອມ, ເຊິ່ງການລົງຄະແນນສຽງໃນບໍລິສັດແມ່ນມີອຳນາດຕໍ່ ບໍລິສັດ ຢ່າງເປັນສາລະສຳຄັນຕໍ່ກິດຈະການ, ຜູ້ບໍລິຫານຫຼັກ ລວມເຖິງຜູ້ອຳນວຍການ ແລະ ເຈົ້າໜ້າທີ່ຂອງບໍລິສັດ ແລະ ສະມາຊິກໃນ ຄອບຄົວໃກ້ຊິດ. ໃນການພິຈາລະນາ ສາຍສຳພັນພາກສ່ວນທີ່ກ່ຽວຂ້ອງລະຫວ່າງບຸກຄົນ ລວມເຖິງພາກສ່ວນທີ່ກ່ຽວຂ້ອງກັນ.

ໃນການພິຈາລະນາຄວາມເປັນໄປໄດ້ ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງບໍ່ໄດ້ ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການຕໍ່ໄປນີ້ແມ່ນລາຍການສາລະສຳຄັນທີ່ກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ:

20.1 ຂາຍສິນຄ້າ ແລະ ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ຂາຍບໍລິການໃຫ້ແກ່:		
ບໍລິສັດໃນເຄືອ	25,940,233,522	4,281,297,023
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	11,430,183,548	5,226,681,986

20.2 ການຊື້ສິນຄ້າ ແລະ ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ທີ່ບທວນຄືນ 30 ມິຖຸນາ 2022 ກີບ
ຊື້ບໍລິການຈາກ:		
ບໍລິສັດໃນເຄືອ	3,362,587,583	-
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	29,963,768,319	20,803,603,596

20 ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

20.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບທາງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 5)	11,641,412,675	11,908,699,209
	11,641,412,675	**11,908,699,209**
ຊັບສິນໝຸນວຽນອື່ນໆ		
ບໍລິສັດໃນເຄືອ (ບົດອະທິບາຍຂໍ້ 7)		
ໜີ້ຕ້ອງຮັບຈາກການປະກອບທຶນ	36,368,330,104	36,368,330,104
ໜີ້ຕ້ອງຮັບອື່ນໆ	72,586,541,509	48,532,229,568
ຫນີ້ຕ້ອງຮັບຈາກດອກເບ້ຍ	23,040,485,402	16,750,933,866
	131,995,357,015	**101,651,493,538**
ຜູ້ບໍລິຫານຫຼັກ (ບົດອະທິບາຍຂໍ້ 7)		
ໜີ້ຕ້ອງຮັບອື່ນໆ ຈາກສ່ວນເພີ່ມມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆ ຈາກການຂາຍຍານພາຫະນະ	17,260,393,862	17,146,313,862
ໜີ້ຕ້ອງຮັບ ດອກເບ້ຍ	23,681,078	-
	39,781,757,280	**39,643,996,202**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 7)		
ໜີ້ຕ້ອງຮັບ ດອກເບ້ຍ	17,859,520,301	17,053,338,653
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	33,135,693,113	30,478,301,632
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	17,093,897,674	17,137,771,596
	68,089,111,088	**64,669,411,882**
	251,507,638,058	**205,964,901,621**
ຊັບສິນບໍ່ໝຸນວຽນອື່ນໆ		
ຜູ້ບໍລິຫານຫຼັກ (ບົດອະທິບາຍຂໍ້ 11)		
ເງິນລ່ວງໜ້າ	34,419,839,505	34,419,839,505
	34,419,839,505	**34,419,839,505**
ລວມໜີ້ຕ້ອງຮັບ	**285,927,477,563**	**252,293,440,335**

20 ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

20.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍລິການ (ຕໍ່)

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງສົ່ງໃຫ້ແກ່:		
ໜີ້ຕ້ອງສົ່ງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 12)	783,238,186	1,417,019,095
	783,238,186	**1,417,019,095**
ໜີ້ສິນໝຸນວຽນອື່ນໆ		
ບໍລິສັດໃນເຄືອ (ບົດອະທິບາຍຂໍ້ 15)		
ໜີ້ຕ້ອງສົ່ງຈາກການປະກອບທຶນ	56,306,694,922	56,306,694,922
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	8,345,039,956	4,446,625,617
ອື່ນໆ	170,351,189,153	151,055,603,884
	235,002,924,031	**211,808,924,423**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 15)		
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	30,530,406,329	676,571,252
ອື່ນໆ	892,751,237	280,312,514
	31,423,157,566	**956,883,766**
ໜີ້ຕ້ອງສົ່ງທັງໝົດ	**267,209,319,783**	**214,182,827,284**

20.4 ເງິນກູ້ຍືມຈາກພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໃນວັນທີ 1 ມັງກອນ	709,402,487,214	390,215,912,000
ເງິນກູ້ຍືມທີ່ໄດ້ຮັບລະຫວ່າງໄລຍະ	66,697,256,733	686,779,240,462
ເງິນກູ້ຍືມທີ່ໄດ້ຈ່າຍຊຳລະຄືນລະຫວ່າງໄລຍະ	(12,421,000,000)	(579,193,592,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	77,537,181,312	211,600,926,752
	841,215,925,259	**709,402,487,214**

ເງິນກູ້ຍືມຈາກພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ຖືກລະບຸໄລຍະການຈ່າຍຄືນ ແລະ ອັດຕາດອກເບ້ຍ ສະເລ່ຍທີ່ 8% ຕໍ່ປີ (2022: 8% ຕໍ່ປີ) (ບົດອະທິບາຍຂໍ້ 14).

20 ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

20.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ໃນວັນທີ 1 ມັງກອນ	139,898,947,042	107,662,386,845
ເງິນໃຫ້ກູ້ຢືມທີ່ໄດ້ຮັບຊຳລະຄືນພາຍໃນໄລຍະ	(12,421,000,000)	(289,130,025)
ກຳໄລຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	9,907,564,924	32,525,690,222
	137,385,511,966	**139,898,947,042**

20.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫານຫຼັກມີດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ລ້ານກີບ	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ
ເງິນເດືອນ ແລະ ອື່ນໆ	1,934	1,357

21 ພາລະຜູກພັນ

ກ. ພາລະຜູກພັນສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້.

ຈຳນວນເງິນທີ່ຕ້ອງຊຳລະໃນອະນາຄົດພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ຕ່ຳກວ່າ 1 ປີ	3,316,333,859	7,872,850,000
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	7,808,728,429	1,690,046,400
ເກີນ 5 ປີ	3,292,199,737	4,194,936,600
	14,417,262,025	**13,757,833,000**

21 ພາລະຜູກພັນ (ຕໍ່)

ຂ) ພາລະຜູກພັນສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ບໍລິສັດ ໄດ້ໃຫ້ເຊົ່າ ສະຖານີປ້ຳນ້ຳມັນ ແລະ ຫ້ອງການ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ. ໜີ້ຕ້ອງຮັບຄ່າເຊົ່າໃນ ອະນາຄົດຂັ້ນຕ່ຳ ໃນວັນທີ 30 ມິຖຸນາ 2023 ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	ທົບທວນຄືນ 30 ມິຖຸນາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ຕ່ຳກວ່າ 1 ປີ	1,087,276,808	1,249,272,000
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	5,436,384,040	4,997,088,000
ເກີນ 5 ປີ	11,892,049,012	18,099,688,819
	18,415,709,860	**24,346,048,819**

22 ເຫດການທີ່ເກີດຂຶ້ນຫຼັງວັນທີບົດລາຍງານ

ບໍ່ມີເຫດການສາລະສຳຄັນ ເກີດຂຶ້ນຫລັງຈາກວັນທີເອກະສານລາຍງານການເງິນ ທີ່ມີຜົນກະທົບຕໍ່ຕົວເລກໃນຂໍ້ມູນການເງິນຂອງ ບໍລິສັດ.